DEPARTMENT OF HEALTH

# ສິ່ງທີ່ຄວນປະຕິບັດສຳລັບນັກຮຽນໃນສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດໃນການໃສ່ໜ້າກາກ

ສິ່ງທີ່ຄວນປະຕິບັດເມື່ອເວລາທ່ານໃສ່ໜ້າກາກ ແລະ ຖອດໜ້າກາກອອກ.

ກ່ອນຈະໃສ່ໜ້າກາກ, ຈົ່ງລ້າງມືດ້ວຍສະບູ ແລະ ນ້ຳສະອາດ ຫຼື ໃຊ້ເຈວລ້າງມືທີ່ມີໄວ້ໃນຫ້ອງຮຽນ.

ໜ້າກາກຄວນຈະພໍດີກັບປາກ ແລະ ດັງຂອງທ່ານ.

ຖ້າໜ້າກາກມີລວດ, ບີບລວດໃຫ້ພໍດີກັບເທິງດັງຂອງທ່ານ.

ສິ່ງສຳຄັນແມ່ນພະຍາຍາມຢ່າຈັບໜ້າກາກໃນຂະນະທີ່ກຳລັງໃສ່. ຖ້າທ່ານຕ້ອງການແປງມັນ, ໃຊ້ສາຍເກາະຫູ ຫຼື ມັດໄວ້ຢູ່ດ້ານຫຼັງ.

ຖ້າທ່ານຈັບໜ້າກາກ, ຈົ່ງລ້າງມື ຫຼື ໃຊ້ເຈວລ້າງມືທີ່ມີໄວ້ຢູ່ໃນຫ້ອງຮຽນຂອງທ່ານ.

ເມື່ອທ່ານຕ້ອງການຖອດໜ້າກາກອອກ, ຫ້າມຈັບດ້ານໜ້າຂອງໜ້າກາກ. ຖອດໜ້າກາກຂອງທ່ານ ໂດຍໃຊ້ສາຍ ທີ່ເກາະຢູ່ຫູ ຫຼື ສາຍທີ່ຄ້ອງຢູ່ຫົວຂອງທ່ານ.

ຫຼັງຈາກທີ່ຖອດໜ້າກາກຂອງທ່ານອອກແລ້ວ, ຈົ່ງລ້າງມື ຫຼື ໃຊ້ເຈວລ້າງມືທັນທີ.

ຖາມຄູວ່າເມື່ອໃດທີ່ຄວນຈະໃຫ້ຖອດໜ້າກາກອອກ, ຕົວຢ່າງຕອນພັກຜ່ອນ ຫຼື ຕອນກິນ.

ຟັງຄູຂອງທ່ານແນະນຳເພື່ອໃຫ້ຮູ້ວ່າເວລາໃດຄວນຈະໃສ່ໜ້າກາກ ເວລາໃດຄວນຈະຖອດໜ້າກາກອອກ, ເພື່ອ ຮັກສາໃຫ້ມັນປອດໄພເວລາທີ່ບໍ່ໄດ້ໃສ່.

ແລະ ໃສ່ໜ້າກາກທີ່ສະອາດໄປໂຮງຮຽນໃນແຕ່ລະມື້.

ໜ້າກາກຂອງຂ້າພະເຈົ້າປ້ອງກັນທ່ານ ແລະ ໜ້າກາກຂອງທ່ານປ້ອງກັນຂ້າພະເຈົ້າ.

ເຂົ້າເບິ່ງທີ່ເວບໄຊທ໌ health.mn.gov ສຳລັບຂໍ້ມູນລ້າສຸດ.


Minnesota Department of Health
Communications Office
P.O. Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us



09/04/20
Mask Do's and Don'ts For Students (Lao)

ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989.